# ບົດປາໄສຂອງ ທ່ານຮອງນາຍົກລັດຖະມົນຕີ ກ່າວຕໍ່ກອງປະຊຸມສະມັດຊາໃຫຍ່ອົງການ ສປຊ ຄັ້ງທີ ໖໓



* ກ່ອນອື່ນໝົດ, ຂ້າພະເຈົ້າ ຂໍຕາງໜ້າໃຫ້ບັນດາຄະນະຜູ້ແທນລາວ ສະແດງຄວາມຊົມເຊີຍ ມາຍັງພະນະທ່ານ ມີເກນ ດ໌ສກອັດໂຕ ບອກມັນ, ນັກການທູດທີ່ມີປະສົບການແຫ່ງປະເທດ ນິກາຣາກວາ, ໃນໂອກາດທີ່ທ່ານໄດ້ຮັບເລືອກຕັ້ງໃຫ້ເປັນປະທານກອງປະຊຸມສະມັດຊາໃຫຍ່ ສປຊ ສະໄໝທີ 63 ຄັ້ງນີ້. ຂ້າພະເຈົ້າເຊື່ອໝັ້ນວ່າ ພາຍໃຕ້ການເປັນປະທານ ຂອງພະນະທ່ານ, ກອງປະຊຸມສະມັດຊາໃຫຍ່ ຂອງພວກເຮົາ ຈະປະສົບຜົນສຳເລັດຢ່າງຈົບງາມ. ພ້ອມດຽວກັນນີ້, ກໍຂໍຍ້ອງຍໍສັນລະເສີນ ພະນະທ່ານ ເຊີຈານ ເກຣິມ ທີ່ໄດ້ສຳເລັດການປະຕິບັດໜ້າທີ່ເປັນປະທານກອງ ປະຊຸມສະມັດຊາໃຫຍ່ ສະໄໝທີ່ຜ່ານມາ.

ສປປ. ລາວ ເວລາໃດກໍເຊື່ອວ່າ ອົງການ ສປຊ ຍັງສືບຕໍ່ເປັນທີ່ປຶກສາທີ່ສຳຄັນ ສຳລັບການແກ້ໄຂບັນຫາການຮ່ວມມືສາກົນ ທາງດ້ານການພັດທະນາ ເສດຖະກິດ, ການປົກປັກຮັກສາສັນຕິພາບ ແລະ ຄວາມໝັ້ນຄົງ, ການສົ່ງເສີມສິດທິມະນຸດ ແລະ ລະບຽບກົດໝາຍ ດ້ວຍຮູບແບບການປຶກສາຫາລື, ການຮ່ວມມືກັນ ແລະ ການສ້າງຄວາມເປັນເອກະສັນກັນ ລະຫວ່າງບັນດາປະເທດສະມາຊິກ. ຕະຫລອດໄລຍະເຄິ່ງສັດຕະວັດທີ່ຜ່ານມາ, ອົງການ ສປຊ ໄດ້ມີບົດບາດອັນສຳຄັນ ໃນການປົກປັກຮັກສາສັນຕິພາບ ແລະ ຄວາມໝັ້ນຄົງ ຢູ່ໃນໂລກ ກໍຄືການສົ່ງເສີມການພັດທະນາເສດຖະກິດ-ສັງຄົມ ຂອງບັນດາປະເທດສະມາຊິກ, ໂດຍສະເພາະປະເທດກຳລັງພັດທະນາ. ປະຈຸບັນ, ພາຍໃຕ້ສະພາບການຂອງໂລກ ທີ່ຜັນແປ ແລະ ເຕັມໄປດ້ວຍຄວາມສັບສົນ, ອົງການ ສປຊ ຍິ່ງຕ້ອງເປັນອົງການທີ່ເຂັ້ມແຂງ ແລະ ມີປະສິດທິພາບກວ່າເກົ່າ ເພື່ອປະຕິບັດພາລະບົດບາດ ຂອງຕົນ. ດ້ວຍເຫດນີ້, ພວກຂ້າພະເຈົ້າເຫັນວ່າ ການດຳເນີນຂະບວນການປະຕິຮູບ ອົງການ ສປຊ ຕ້ອງໃຫ້ມີລັກສະນະກວ້າງຂວາງ, ມີຄວາມໂປ່ງໃສ, ຮອບດ້ານ ແລະ ມີຄວາມກ້າວເກົ່າກັນ ແນໃສ່ຮັບປະກັນປະສິດທິພາບ ແລະ ຄວາມຮັບຜິດຊອບສູງ. ພວກເຮົາຕ້ອງເພີ່ມທະວີ ອຳນາດ ແລະ ພາລະບົດບາດຂອງສະມັດຊາໃຫຍ່ໃຫ້ສູງຂຶ້ນ, ລວມທັງພາລະບົດບາດ ໃນການແກ້ໄຂບັນຫາສັນຕິພາບ ແລະ ຄວາມໝັ້ນຄົງ ສາກົນ ໃນຖານະເປັນ ອົງການຜູ້ຕາງໜ້າ ແລະ ອົງກອນຕົ້ນຕໍ ຂອງ ສປຊ ໃນການຕັດສິນບັນຫາທີ່ເຄັ່ງຮ້ອນຂອງຖລກ. ພວກເຮົາຕ້ອງປັບປຸງແບບແຜນວິທີເຮັດວຽກ ຂອງສະມັດຊາໃຫຍ່ ເພື່ອໃຫ້ສອດຄ່ອງກັບຫລັກການປະຊາທິປະໄຕ, ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບຮ່ວມກັນ. ພ້ອມດຽວກັນນີ້, ພວກເຮົາຍັງຕ້ອງປະຕິຮູບຄວາມໝັ້ນຄົງ ແນໃສ່ເຮັດໃຫ້ສະພາດັ່ງກ່າວ ມີປະຊາທິປະໄຕຫລາຍຂຶ້ນ, ທັງເປັນອົງການຕົວແທນແຫ່ງສິດຜົນປະໂຫຍດ ຂອງປະເທດສະມາຊິກທັງໝົດ ລວມທັງການປັບປຸງສະມາຊິກຖາວອນ ແລະ ສະມາຊິກ ບໍ່ຖາວອນທີ່ສົມເຫດສົມຜົນ, ທັງນີ້ກໍ ເພື່ອເຮັດໃຫ້ສະພາດັ່ງກ່າວ ສາມາດປົກປັກຮັກສາ ແລະ ສົ່ງເສີມສັນຕິພາບ ແລະ ຄວາມໝັ້ນຄົງສາກົນ. ຄຽງຄູ່ກັນນີ້, ພວກເຮົາຕ້ອງສຸມໃສ່ເພີ່ມທະວີພາລະບົດບາດ ຂອງອົງການ ສປຊ ໃນຂະແໜງການພັດທະນາ ເປັນຕົ້ນແມ່ນພາລະບົດບາດ ຂອງຫ້ອງການເສດຖະກິດ ແລະ ສັງຄົມ ຂອງ ສປຊ, ອົງການ ສປຊ ດ້ານການຄ້າ ແລະ ການພັດທະນາ, ບັນດາຄະນະກຳມາທິການປະຈຳພາກພື້ນ ແລະ ອື່ນໆ, ທັງ ນີ້ກໍເພື່ອເຮັດໃຫ້ ອົງກອນເຫລົ່ານີ້ສາມາດປະກອບສ່ວນຊ່ວຍເຫລືອ ບັນດາປະເທດກຳລັງພັດທະນາ ໃນການບັນລຸເປົ້າໝາຍສາກົນ ດ້ານການພັດທະນາ ໃຫ້ສອດຄ່ອງກັບຍຸດທະສາດດ້ານການພັດທະນາແຫ່ງຊາດຂອງຕົນ.

ບົນຈິດໃຈດັ່ງກ່າວ, ພວກຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍ ມາຍັງທ່ານ ເລຂາທິການໃຫຍ່ ບັນກີມູນ ທີ່ໄດ້ດຳເນີນການປະຕິຮູບຢ່າງເອົາໃຈໃສ່ ແນໃສ່ເຮັດໃຫ້ອົງການ ສປຊ ສາມາດຕອບຮັບກັບສະພາບການອັນໃໝ່ ຂອງຍຸກສະໄໝ, ມີຄວາມເຂັ້ມແຂງ ແລະ ສາມາດປະຕິບັດໜ້າທີ່ຫລາຍຢ່າງ ໄດ້ຢ່າງມີປະສິດທິຜົນ, ຄຽງຄູ່ກັນນີ້, ພວກຂ້າພະເຈົ້າ ຂໍສະແດງຄວາມຍ້ອງຍໍຊົມເຊີຍເປັນພິເສດ ຕໍ່ຄວາມພະຍາຍາມອັນຂະຫຍັນຂັນແຂງ ຂອງທ່ານເລຂາທິການໃຫຍ່ ໃນພາລະກິດປົກປັກຮັກສາ ສັນຕິພາບ ກໍຄືການຊອກຊ່ອງທາງເພື່ອແກ້ໄຂ ສະພາບວິກິດການສາມປະການ ຂອງໂລກ ຄື: ວິກິດການດ້ານການເງິນ, ພະລັງງານ ແລະ ສະບຽງອາຫານ.

ບັນຫາການຫລຸດຜ່ອນກຳລັງອາວຸດ ຍັງສືບຕໍ່ເປັນບັນຫາທີ່ໜ້າເປັນຫ່ວງ. ການຄົງຕົວຂອງອາວຸດນິວເຄລຍ ກໍຄືການນຳໃຊ້ອາວຸດດັ່ງກ່າວ ໄດ້ກາຍເປັນໄພຂົ່ມຂູ່ທີ່ຮ້າຍແຮງຕໍ່ໂລກຂອງພວກເຮົາ. ດັ່ງນັ້ນ. ບັນດາປະເທດທີ່ມີອາວຸດນິວເຄລຍໃນຄອບຄອງ ຕ້ອງປະຕິບັດຕາມຄຳໝັ້ນສັນຍາຂອງຕົນ ໃນການລົບລ້າງອາວຸດນິວເຄລຍຢ່າງສິ້ນເຊີງ. ພ້ອມດຽວກັນນີ້ ວົງຄະນາຍາດສາກົນ ຈຳເປັນຕ້ອງໄດ້ ເພີ່ມທະວີຄວາມພະຍາຍາມໃນການແກ້ໄຂບັນຫາທີ່ເປັນອຸປະສັກ ເພື່ອບັນລຸເປົ້າໝາຍແຫ່ງການລົບລ້າງ ແລະ ການບໍ່ແຜ່ຂະຫຍາຍອາວຸດເຫລົ່ານີ້.

ເຖິງແມ່ນວ່າ ຂະບວນໂລກາພິວັດໄດ້ສ້າງກາລະໂອກາດຫລາຍຢ່າງ ໃຫ້ແກ່ການພັດທະນາເສດຖະກິດ, ແຕ່ກໍຍັງມີອຸປະສັກນາງປະການ ທີ່ໂລກຂອງພວກເຮົາ ກຳລັງປະເຊີນ ໃນປະຈຸບັນ, ບັນດາປະເທດກຳລັງພັດທະນາ, ໂດຍສະເພາະບັນດາປະເທດທີ່ມີຄວາມອ່ອນໄຫວທີ່ສຸດ, ເປັນຕົ້ນປະເທດດ້ອຍພັດທະນາ, ປະເທດກຳລັງພັດທະນາ ທີ່ບໍ່ມີຊາຍແດນຕິດທະເລ ແລະ ປະເທດກຳລັງພັດທະນາເກາະດອນນ້ອຍ ໄດ້ພະຍາຍາມເຊື່ອມໂຍງຕົນເອງ ເຂົ້າກັບລະບົບເສດຖະກິດໂລກ. ເຖິງຢ່າງໃດກໍຕາມ, ຄວາມສາມາດ ໃນການເຊື່ອມໂຍງເສດຖະກິດ ຂອງບັນດາປະເທດເຫລົ່ານີ້ ຍັງຖືກຈຳກັດ ຍ້ອນຂາດພື້ນຖານໂຄງລ່າງພັດທະນາທີ່ເຂັ້ມແຂງ, ຄວາມສາມາດເຂົ້າເຖິງຕະຫລາດຈຳກັດ, ຂາດທຶນຮອນ ແລະ ເຕັກໂນໂລຊີທີ່ທັນສະໄໝ, ລວມທັງຄວາມສາມາດຕອບສະໜອງດ້ານການເງິນ ແລະ ບໍລິມາດ ການລົງທຶນຍັງຕ່ຳ.

ການຖີບຕົວຂຶ້ນຂອງລາຄານ້ຳມັນ ແລະ.ສະບຽງອາຫານ ໄດ້ເຮັດໃຫ້ເສດຖະກິດ ຢູ່ໃນຫລາຍປະເທດຂາດສະຖຽນລະພາບ; ໂດຍສະເພາະມັນໄດ້ສົ່ງຜົນກະທົບຢ່າງຮຸນແຮງຕໍ່ປະເທດກຳລັງພັດທະນາ ທີ່ຍັງຂາດຄວາມສາມາດທາງດ້ານເຕັກນິກ ແລະ ການເງິນ ເພື່ອຮັບມືກັບສະພາບວິກິດການດັ່ງກ່າວ. ເພື່ອປະເຊີນກັບບັນຫາດັ່ງກ່າວ, ພວກຂ້າພະເຈົ້າເຫັນວ່າ ຄວນເອົາໃຈໃສ່ປະຕິບັດ ຖະແຫລງການ ກຸງໂຣມ ຢ່າງມີປະສິດທິຜົນ, ສ້າງຕັ້ງທະນາຄານ ສະບຽງອາຫານໂລກ ແລະ ກອງທຶນສະບຽງອາຫານສາກົນ ແນໃສ່ຮັບປະກັນຄວາມໝັ້ນຄົງ ດ້ານສະບຽງອາຫານ ໃນໄລຍະຍາວ ໃຫ້ແກ່ປະເທດກຳລັງພັດທະນາ, ໂດຍສະເພາະ ບັນດາປະເທດທີ່ມີຄວາມອ່ອນໄຫວກວ່າໝູ່. ພ້ອມດຽວກັນນີ້, ຄວາມສາມາດບົ່ມຊ້ອນອັນມະຫາສານ ຂອງປະເທດກຳລັງພັດທະນາ ຄວນໄດ້ຮັບການຂຸດຄົ້ນ ແລະ ນຳໃຊ້ໃຫ້ເກີດປະໂຫຍດສູງສຸດ ໂດຍຜ່ານ ການລົງທຶນ ແລະ ການຖ່າຍທອດເຕັກໂນໂລຊີ ຈາກປະເທດພັດທະນາແລ້ວ ກໍຄືຄູ່ຮ່ວມພັດທະນາອື່ນໆ ແນໃສ່ຮັບປະກັນຜົນປະໂຫຍດຮ່ວມກັນ. ຂ້າພະເຈົ້າ ຂໍຢ້ຳຄືນອີກວ່າ ນະໂຍບາຍສາກົນ ດ້ານພະລັງງານ ຕ້ອງຊ່ວຍໜູນຄວາມພະຍາຍາມ ຂອງບັນດາປະເທດກຳລັງພັດທະນາ, ໂດຍສະເພາະປະເທດດ້ອຍພັດທະນາ ໃນການລົບລ້າງຄວາມທຸກຍາກ ແລະ ບັນລຸການພັດທະນາແບບຍືນຍົງ.

ຕໍ່ສະພາບດັ່ງກ່າວນີ້, ເພື່ອເຮັດໃຫ້ປະເທດກຳລັງພັດທະນາ ສາມາດຍາດແຍ່ງຜົນປະໂຫຍດອັນແທ້ຈິງ ຈາກຂະບວນໂລກາພິວັດໄດ້ນັ້ນ ວົງຄະນາຍາດສາກົນ ຕ້ອງສ້າງເງື່ອນໄຂທີ່ເອື້ອອຳນວຍ ໃຫ້ແກ່ການດຳເນີນການພັດທະນາ, ສົ່ງເສີມສິດທິ ແລະ ຜົນປະໂຫຍດຂອງບັນດາປະເທດກຳລັງພັດທະນາ. ເພື່ອບັນລຸເປົ້າໝາຍດັ່ງກ່າວ, ມັນມີຄວາມຈຳເປັນຕ້ອງເພີ່ມທະວີ ການຊ່ວຍເຫລືອລ້າ ແລະ ທຶນກູ້ຢືມດອກເບ້ຍຕ່ຳ, ວາງມາດຕະການທີ່ເໝາະສົມ ເພື່ອແກ້ໄຂສະພາບປັ່ນປ່ວນ ແລະ ຄວາມອ່ອນໄຫວ ຂອງຕະຫລາດສິນຄ້າ, ໃຫ້ສິດທິ ແລະ ອັດຕາພາສີພິເສດ ແກ່ສິນຄ້າ